ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງການເງິນ
ກົມຈັດຕັ້ງ ແລະ ພະນັກງານ

ເລກທີ 1190 /ກຈພ
ນະຄອນຫຼວງວຽງຈັນ, ວັນທີ 30 ກໍລະກົດ 2021

# ປະກາດຮັບສະໝັກລັດຖະກອນໃໝ່

ກະຊວງການເງິນຂໍຖືເປັນກຽດແຈ້ງມາຍັງທ່ານທີ່ມີຄວາມສົນໃຈຢາກສະໝັກສອບເສັງເຂົ້າເປັນລັດຖະກອນໃໝ່ຢູ່ກະຊວງການເງິນ ແລະ ຂະແໜງການເງິນຂັ້ນທ້ອງຖິ່ນ ປີ 2021 ຊາບວ່າ: ປັດຈຸບັນກະຊວງການເງິນ ຈະໄດ້ຈັດຕັ້ງການສອບເສັງບັນຈຸລັດຖະກອນໃໝ່ ເພື່ອຄັດເລືອກເອົາຜູ້ທີ່ມີຄວາມຮູ້ ແລະ ຄວາມສາມາດ ປະກອບເຂົ້າໃສ່ຕໍາແໜ່ງງານທີ່ຍັງຫວ່າງ ຕາມຄວາມເໝາະສົມ ລາຍລະອຽດມີຄືດັ່ງນີ້:

## I. ບັນຈຸຢູ່ກະຊວງການເງິນ ມີ 11 ຕໍາແໜ່ງງານ ທີ່ຕ້ອງການ ດັ່ງນີ້:

1. ສາຂາວິຊາການເງິນ-ການບັນຊີ ຈໍານວນ 03 ຄົນ;
2. ສາຂາວິຊາໄອທີ ຈໍານວນ 04 ຄົນ;
3. ສາຂາວິຊາພາສາອັງກິດ ຈໍານວນ 01 ຄົນ;
4. ສາຂາວິຊາກົດໝາຍ ຈໍານວນ 01 ຄົນ;
5. ສາຂາວິຊາເສດຖະສາດ ຈໍານວນ 01 ຄົນ;
6. ສາຂາວິຊາສື່ມວນຊົນ ຈໍານວນ 01 ຄົນ.

- **ເງື່ອນໄຂຂອງຜູ້ທີ່ຈະເຂົ້າຮ່ວມສະໝັກສອບເສັງບັນຈຸເຂົ້າເປັນລັດຖະກອນໃໝ່ຢູ່ກະຊວງການເງິນ ມີດັ່ງນີ້:**

1. ຕ້ອງຮຽນຈົບລະດັບວິຊາສະເພາະ**ຊັ້ນສູງ ຂຶ້ນໄປ** ຢູ່ພາຍໃນ ແລະ ຕ່າງປະເທດ ຕາມແຕ່ລະສາຂາວິຊາທີ່ໄດ້ກໍານົດ;
2. **ສໍາລັບຜູ້ທີ່ສະໝັກສອບເສັງສາຂາວິຊາພາສາອັງກິດ** ແມ່ນໃຫ້ປະກອບໃບຢັ້ງຢືນຈົບ/ໃບຢັ້ງຢືນການທົດສອບພາສາອັງກິດຕ່າງໆ ເຊັ່ນ: **IELTS, TOEFL, TOEIT** ມາພ້ອມ, ສ່ວນຜູ້ທີ່ຮຽນຈົບຈາກຕ່າງປະເທດໃນສາຂາວິຊາບໍລິຫານທຸລະກິດ ແລະ ທະນາຄານ ແມ່ນໃຫ້ສອບເສັງເຂົ້າໃນສາຂາວິຊາພາສາອັງກິດໄດ້;
3. **ສ່ວນສາຂາວິຊາສື່ມວນຊົນ (ບໍ່ຈໍາກັດສາຂາວິຊາຮຽນ), ແຕ່ຕ້ອງມີປະສົບການໃນການເປັນນັກຂ່າວ ແລະ ພິທີກອນອ່ານຂ່າວມາກ່ອນ,** ມີທັດສະນະໃນການເວົ້າ, ຟັງ, ຂຽນພາສາລາວໄດ້ເປັນຢ່າງດີ ແລະ ມີຄວາມຮູ້ທາງດ້ານພາສາຕ່າງປະເທດໃດໜຶ່ງ.
4. ເປັນພົນລະເມືອງລາວຖືສັນຊາດລາວ, **ເພດ:** ຊາຍ ຫຼື ຍິງ **ມີອາຍຸ 18 ຂຶ້ນໄປ ແຕ່ບໍ່ເກີນ 35 ປີ;**
5. ບໍ່ເຄີຍຖືກສານປະຊາຊົນຕັດສິນລົງໂທດ, ຕັດອິດສະຫຼະພາບ, ບໍ່ເຄີຍຖືກວິໄນໄລ່ອອກຈາກອົງການຈັດຕັ້ງພັກ-ລັດ, ເອກະຊົນ ແລະ ລັດວິສາຫະກິດ ຫຼື ອົງການຈັດຕັ້ງສາກົນ;
6. ມີສຸຂະພາບແຂງແຮງ, ມີມະນຸດສໍາພັນດີ, ມີຄວາມອົດທົນ ແລະ ສັດຊື່ບໍລິສຸດ.

## II. ບັນຈຸຢູ່ຂະແໜງການເງິນຂັ້ນທ້ອງຖິ່ນ ມີ 25 ຕໍາແໜ່ງງານ ທີ່ຕ້ອງການ ດັ່ງນີ້:

1. **ສາຂາວິຊາການເງິນ-ການບັນຊີ ຈໍານວນ 25 ຄົນ,** ໃນນັ້ນແຂວງຜົ້ງສາລີ 02 ຄົນ, ອຸດົມໄຊ 02 ຄົນ, ບໍ່ແກ້ວ 01 ຄົນ, ຫຼວງນໍ້າທາ 02 ຄົນ, ຫຼວງພະບາງ 02 ຄົນ, ໄຊຍະບູລີ 02 ຄົນ, ຊຽງຂວາງ 02 ຄົນ, ຫົວພັນ 02 ຄົນ, ແຂວງວຽງຈັນ 01 ຄົນ, ໄຊສົມບູນ 02 ຄົນ, ບໍລິຄໍາໄຊ 01 ຄົນ, ຄໍາມ່ວນ 01 ຄົນ, ສາລະວັນ 02 ຄົນ, ເຊກອງ 01 ຄົນ ແລະ ອັດຕະປື 02 ຄົນ.

- **ເງື່ອນໄຂຂອງຜູ້ທີ່ຈະເຂົ້າຮ່ວມສະໝັກສອບເສັງບັນຈຸເຂົ້າເປັນລັດຖະກອນໃໝ່ຢູ່ຂະແໜງການເງິນຂັ້ນທ້ອງຖິ່ນ ມີດັ່ງນີ້:**

1. ຕ້ອງຮຽນຈົບລະດັບວິຊາສະເພາະ**ຊັ້ນສູງ ຂຶ້ນໄປ** ຢູ່ພາຍໃນ ແລະ ຕ່າງປະເທດ ໃນສາຂາວິຊາການເງິນ-ການບັນຊີ, ເສດຖະສາດ, ບໍລິຫານທຸລະກິດ ແລະ ທະນາຄານ, **ສ່ວນຜູ້ທີ່ຮຽນຈົບໃນສາຂາວິຊາອື່ນ ແມ່ນບໍ່ຮັບຄໍາຮ້ອງເຂົ້າສອບເສັງ**;
2. **ຄົນແຂວງໃດ ແມ່ນໃຫ້ສະໝັກສອບເສັງເຂົ້າແຂວງນັ້ນເລີຍ (ບໍ່ຮັບຄົນແຂວງອື່ນເຂົ້າສອບເສັງ)**;
3. ເປັນພົນລະເມືອງລາວຖືສັນຊາດລາວ, **ເພດ**: ຊາຍ ຫຼື ຍິງ **ມີອາຍຸ 18 ຂຶ້ນໄປ ແຕ່ບໍ່ເກີນ 35 ປີ;**
4. ບໍ່ເຄີຍຖືກສານປະຊາຊົນຕັດສິນລົງໂທດ, ຕັດອິດສະຫຼະພາບ, ບໍ່ເຄີຍຖືກວິໄນໄລ່ອອກຈາກອົງການຈັດຕັ້ງພັກ-ລັດ, ເອກະຊົນ ແລະ ລັດວິສາຫະກິດ ຫຼື ອົງການຈັດຕັ້ງສາກົນ;
5. ມີສຸຂະພາບແຂງແຮງ, ມີມະນຸດສໍາພັນດີ, ມີຄວາມອົດທົນ ແລະ ສັດຊື່ບໍລິສຸດ.

**III. ການພິວພັນ, ຄ່າທໍານຽມ, ວັນ, ເວລາ ແລະ ສະຖານທີ່ຮັບຄໍາຮ້ອງສະໝັກສອບເສັງ:**

1. **ການສະໝັກສອບເສັງບັນຈຸເຂົ້າເປັນລັດຖະກອນໃໝ່ຢູ່ກະຊວງການເງິນ** ແມ່ນໃຫ້ພິວພັນ ແລະ ຍື່ນເອກະສານສະໝັກສອບເສັງດ້ວຍຕົນເອງ ຢູ່ທີ່ສະຖາບັນເສດຖະກິດ-ການເງິນ **(ດົງຄໍາຊ້າງ)** ນະຄອນຫຼວງວຽງຈັນ ແລະ **ບໍ່ອະນຸຍາດໃຫ້ບຸກຄົນອື່ນມາພິວພັນຮັບ-ສົ່ງເອກະສານແທນ;**
2. **ການສະໝັກສອບເສັງບັນຈຸເຂົ້າເປັນລັດຖະກອນໃໝ່ຢູ່ຂະແໜງການເງິນຂັ້ນທ້ອງຖິ່ນ** ແມ່ນໃຫ້ພິວພັນກັບພະແນກການເງິນແຂວງ ທີ່ໄດ້ຮັບໂກຕ້າລັດຖະກອນໃໝ່ ປີ 2021 ເພື່ອປະກອບສໍານວນເອກະສານ ແລ້ວຍື່ນເອກະສານສະໝັກສອບເສັງດ້ວຍຕົນເອງ ຕາມບ່ອນຮັບເອກະສານຕົວຈິງ ແລະ **ບໍ່ອະນຸຍາດໃຫ້ບຸກຄົນອື່ນມາພິວພັນຮັບ-ສົ່ງເອກະສານແທນ**;
3. ຄ່າທໍານຽມລົງທະບຽນເຂົ້າຮ່ວມການສອບເສັງ **ຄົນລະ 20.000 ກີບ (ຊາວພັນກີບ)**;
4. ເລີ່ມພິວພັນ ແລະ ຮັບເອກະສານສະໝັກສອບເສັງ **ນັບແຕ່ວັນທີ 02 ສິງຫາ 2021 (ກໍານົດ 05 ວັນ ລັດຖະການ) ແລະ ປິດຮັບຄໍາຮ້ອງ ວັນທີ 06 ສິງຫາ 2021 (ເວລາ 16:00 ໂມງ)**;
5. ສາມາດດາວໂຫຼດໜັງສືຄໍາຮ້ອງສະໝັກເຂົ້າສອບເສັງໄດ້ທາງເວບໄຊ໌ ກະຊວງການເງິນ **www.mof.gov.la**;
6. ຕິດຕໍ່ສອບຖາມຂໍ້ມູນເພີ່ມເຕີມໄດ້ທີ່ ກົມຈັດຕັ້ງ ແລະ ພະນັກງານ ກະຊວງການເງິນ ໂທ/ແຟັກ: 021 451836, 020 22222883.

**IV. ເອກະສານປະກອບຄໍາຮ້ອງສະໝັກເຂົ້າສອບເສັງ.**

| | | |
|---|---|---|
| 1. ໜັງສືຄໍາຮ້ອງສະໝັກເຂົ້າສອບເສັງ **(ຂອງກະຊວງການເງິນ)** | | 01 ຊຸດ; |
| 2. ສໍາເນົາໃບປະກາສະນິຍະບັດ ແລະ ໃບຄະແນນ | ຢ່າງລະ | 01 ຊຸດ; |
| 3. ຊີວະປະຫວັດຫຍໍ້ທົ່ວໄປ | | 01 ຊຸດ; |
| 4. ສໍາເນົາປຶ້ມສໍາມະໂນຄົວ ແລະ ບັດປະຈໍາຕົວ | ຢ່າງລະ | 01 ຊຸດ; |
| 5. ຮູບຖ່າຍບໍ່ເກີນ 03 ເດືອນ **(ຂະໜາດ 3X4) ພື້ນສີຂາວ** | | 03ໃບ; |
| 6. ໃບແຈ້ງໂທດ | | 01 ໃບ. |

**V. ການສັບຊ້ອນພາຍຫຼັງສອບເສັງໄດ້.**

ກະຊວງການເງິນຈະບໍ່ໄດ້ສັບຊ້ອນຜູ້ທີ່ສອບເສັງໄດ້ ໄປສັງກັດຢູ່ ຂະແໜງພາສີ ແລະ ສ່ວຍສາອາກອນ, ຈະໄດ້ສັບຊ້ອນໄປສັງກັດຢູ່ ກົມວິຊາສະເພາະອື່ນໆ ຂອງກະຊວງການເງິນ ແລະ ຈໍານວນໜຶ່ງ ຈະໄດ້ສັບຊ້ອນໄປສັງກັດຢູ່ຂະແໜງການເງິນຂັ້ນທ້ອງຖິ່ນ ທີ່ຍັງຂາດພະນັກງານ, **ຖ້າຜູ້ທີ່ສອບເສັງໄດ້ ບໍ່ໄປຕາມການສັບຊ້ອນຂອງກະຊວງການເງິນ ຖືວ່າສະຫຼະສິດ.**

**ເຊັນແທນຫົວໜ້າກົມ**

**ຮອງຫົວໜ້າກົມ**

ກະຊວງການເງິນ

ກົມຈັດຕັ້ງແລະພະນັກງານ

**ອຸໄທ ອິນທິລາດ**